# ວັນນະກຳໄທໃຕ້ຄົງ

12

## ດາວ ເຊັງ ຮົວ

ຄຳວ່າໃຕ້ຄົງນັ້ນ ໝາຍຄວາມວ່າ ພາຍໃຕ້ແມ່ນ້ຳຄົງ ຫລືແມ່ນ້ຳສາລະວິນ ເປັນຊື່ຂອງແຂວງ ແຂວງນີ້ຢູ່ໃນມົນທົນຢູນນານ ສາທາລະນະລັດປະຊາຊົນຈີນ ຕິດກັບພະມ້າ ໃນເຂດໃຕ້ຄົງລວມທັງໝົດມີ 12 ຫົວເມືອງ ຕາມການຕັ້ງເມືອງຂອງຄົນໄຕໃນສະໄໝໂບຮານ ສິບສອງຫົວເມືອງນີ້ຄື: ເມືອງໜ້າ, ເມືອງຈ້ານຕາ, ເມືອງຈ້ານເສ, ເມືອງຂອນ, ເມືອງເຈຝາງ, ເມືອງຂີ, ເມືອງຕີ້, ເມືອງຫົ້ມ, ເມືອງຢ້າງ, ເມືອງວັນ, ເມືອງສາ, ເມືອງມາວວັນເຕງເປັນຕົ້ນ ລັດຖະບານຈີນໄດ້ຣວມຫົວເມືອງທັງໝົດດັ່ງກ່າວ ເປັນປຶກແຜ່ນ ແລະ ປະກາດໃຫ້ເປັນເຂດປົກຄອງຕົນເອງ ເມື່ອເດືອນກໍລະກະດາ ຄ.ສ. 1953 ມີຊື່ເຕັມຄື ເຂດປົກຄອງຕົນເອງຊົນຊາດໄຕແລະຊົນຊາດຈິງໂພແຫ່ງໃຕ້ຄົງ (Dehong Dai and Jingpo Nationalities Autonomous Prefecture) ແຂວງນີ້ປະກອບດ້ວຍ 2 ນະຄອນ 3 ເມືອງ ມີຊື່ດັ່ງຕໍ່ໄປນີ້:

| | |
|---|---|
| ນະຄອນລູ່ຊີ | (ເມືອງຂອນ, ເມືອງເຈຝາງ) |
| ນະຄອນຢຸ່ຍລີ່ | (ເມືອງມາວ ວັນເຕງ) |
| ເມືອງຫຍິງຈຽງ | (ເມືອງໜ້າ, ເມືອງຈ້ານຕາ, ເມືອງຈ້ານເສ) |
| ເມືອງຫລຽງເຫີ | (ເມືອງຕີ້, ເມືອງຫົ້ມ, ເມືອງຢ້າງ) |
| ເມືອງຫລ່ວງຊວນ | (ເມືອງວັນ, ເມືອງສາ) |

### ເມືອງຫລວງ ຫລືທີ່ວ່າລັດຖະການຂອງແຂວງ ຄື ນະຄອນລູ່ຊີ

ປະຊາກອນໃນເຂດໃຕ້ຄົງ ປະກອບດ້ວຍຊົນຊາດກຸ່ມໃຫຍ່ 6 ຊົນຊາດ ໄດ້ແກ່ຊົນຊາດໄຕ ຊົນຊາດຈິງໂພ ຫລືກະສິ່ນ ຊົນຊາດລີຊໍ ຊົນຊາດເຕ໋ອວ່າງ ຫລືຊົນຊາດປະຫລ່ອງ ຊົນຊາດອາຊາງ ແລະ ຊົນຊາດອັ່ນ ຫລືຊົນຊາດຈີນ ຄົນໄທໃຕ້ຄົງຮຽກຕົວເອງວ່າໄຕ ດັ່ງນັ້ນ ຄົນອື່ນຈຶ່ງຮຽກຄົນໄທໃຕ້ຄົງວ່າ ໄຕໃຕ້ຄົງ

# ປະເພດຂອງວັນນະກຳໄທໃຕ້ຄົງ

ຄົນໄທໃຕ້ຄົງມີວັນນະກຳຫລາຍລັກສະນະ ເປັນຈຳນວນຫລວງຫລາຍ ທີ່ສຳຄັນ ມີ 3 ປະເພດ ດັ່ງຕໍ່ໄປນີ້ :

**(1) ຮ້ອຍກອງ ຮ້ອຍກອງທີ່ສຳຄັນ ແລະ ຍັງນິຍົມໃຊ້ກັນໃນປັດຈຸບັນ ມີດັ່ງຕໍ່ໄປນີ້ :**

1. ຄຳກັບທຸກ ຄຳກັບທຸກມີຄວາມໝາຍວ່າ ຄຳທີ່ສຳຜັດກັນ ເປັນຮ້ອຍກອງ ອ່ານ ຮ້ອງບໍ່ໄດ້ ຄຳກັບທຸກ ນິຍົມໃຊ້ໃນການແຕ່ງບົດກອນ ຫລືຄຳອ່ານຫລິ້ນຂອງເດັກ
2. ຄຳໝາກ ຄຳໝາກນິຍົມຮ້ອງໃນທົ່ງໃນປ່າ ແຕ່ລະເມືອງມີຄຳໝາກສະເພາະຖິ່ນຂອງຕົນ ເຊັ່ນ ຄຳໝາກເມືອງໜ້າ ຄຳໝາກເມືອງຂອນ ເປັນຕົ້ນ ເນື້ອຫາບໍ່ຈຳກັດ ສະແດງຄວາມຮູ້ສຶກນຶກຄິດດ້ານໃດກໍໄດ້
3. ຄຳຂຽວ ຄຳຂຽວມີຄວາມໝາຍວ່າ ທຳນອງນົກແກ້ວ ໃນສະໄໝກ່ອນໃຊ້ໃນຈີດພາຍ ໜຸ່ມສາວ ປັດຈຸບັນນີ້ຄົນໄທໃຕ້ຄົງໃຊ້ຄຳຂຽວໃນລະຄອນ ແລະ ໃຊ້ທຳນອງຄຳຂຽວບັນຍາຍ ຫລືເປັນບົດຊົມສິ່ງຕ່າງໆ
4. ຄຳກອງ ຄຳກອງໃຊ້ໃນເວລາລຳກອງ ຊຶ່ງຄົນໄທໃຕ້ຄົງຮຽກວ່າ ກ້າກອງ ຊາວບ້ານຈະລຳກັນເປັນວົງ ເນື້ອຫາຄຳກອງສ່ວນຫລາຍຈະເປັນການຊົມບ້ານເມືອງ ແລະ ທຳມະຊາດ ຕະຫລອດຈົນ ຖ່າຍທອດອາລົມເບີກບານໃຈ
5. ຄຳມ້າສິບສອງ ມ້າສິບສອງມີຄວາມໝາຍວ່າ ມ້າ 12 ຕົວ ຄຳມ້າໃນກາສິບສອງ ໃຊ້ໃນການສະແດງມ້າສິບສອງໃນເວລາກຸດຈີນ ມ້າສິບສອງສະແດງເຖິງດິນຟ້າອາກາດ ການທຳມາຫາກິນ ແລະ ກິດຈະກຳຕ່າງໆ ຂອງຄົນໄທໃຕ້ຄົງແຕ່ລະເດືອນ ຕັ້ງແຕ່ຕົ້ນປີ ເຖິງປາຍປີ ເວລາສະແດງຕ້ອງມີຜູ້ບ່າວ 6 ຄົນ ຜູ້ສາວ 6 ຄົນ ແຕ່ງກາຍຄືຄົນຂີ່ມ້າ ໂດຍສ່ວນທີ່ເປັນມ້າໃຊ້ໄມ້ໄຜ່ສານ ຕິດເຈັ້ຽເອ້ ບ່າວສາວ ແຍກກັນເຂົ້າແຖວ ຝ່າຍຍິງ ແລະ ຝ່າຍຊາຍ ຮ້ອງສະຫລັບກັນ ຮ້ອງບັນຍາຍເຫດການແຕ່ລະເດືອນ ຕາມລຳດັບ
6. ຄຳລິກ ຄຳລິກມີຄວາມໝາຍວ່າ ທຳນອງຄຳພີ ທຳນອງຄຳລິກ ໃຊ້ໃນເວລາອ່ານຮ້ອຍກອງຍາວທີ່ເປັນວັນນະກຳຕ່າງໆ ຮວມທັງທີ່ເປັນວັນນະກຳທາງສາສະໜາ ແລະ ວັນນະກຳພື້ນບ້ານທົ່ວໄປ

7. ຄຳເຈົ້ງ ຄຳເຈົ້ງມີຄວາມໝາຍວ່າ ທຳນອງລະຄອນ ແຕ່ປັດຈຸບັນກໍຮ້ອງໃນທົ່ງໃນປ່ານຳ ມີທັງ ຄຳເຈົ້ງຜູ້ຊາຍ ແລະ ຄຳເຈົ້ງຜູ້ຍິງ ແລະ ແຕ່ລະເມືອງກໍມີຄຳເຈົ້ງທີ່ມີລັກສະນະສະເພາະເມືອງ ຄຳເຈົ້ງຜູ້ຊາຍ ແລະ ຄຳເຈົ້ງຜູ້ຍິງຈະມີຄວາມແຕກຕ່າງກັນ
8. ຄຳຕິ່ງຄຳເປ້ ຄຳວ່າຕິ່ງ ໝາຍເຖິງຊໍອູ້ ຄຳວ່າເປ້ ໝາຍເຖິງເຄື່ອງດົນຕີນ້ອຍໆ ທີ່ດີດຣິມສິບ ຄຳຕິ່ງຄຳເປ້ ບໍ່ແມ່ນທຳນອງທີ່ຮ້ອງອອກປາກເປັນພາສາ ຄຳຕິ່ງເປັນທຳນອງສີຊໍ ຄຳເປ້ ເປັນທຳນອງ ດີດເປ້ ຄຳຕິ່ງຄຳເປ້ໃຊ້ໃນເວລາບ່າວສາວລົມກັນ ຜູ່ບ່າວໃຊ້ຄຳຕິ່ງ ຜູ່ສາວໃຊ້ ຄຳເປ້
9. ຄຳໄຫ້ ຄຳວ່າໄຫ້ ໝາຍເຖິງຮ້ອງໄຫ້ ແຍກອອກເປັນຄຳຮ້ອງໄຫ້ງານສົບ ແລະ ຮ້ອງໄຫ້ງານແຕ່ງງານ

ໃນງານສົບ ລູກຫລານ ແລະ ຍາດຜູ້ຍິງຂອງຜູ້ເສຽຊີວິດ ຕ້ອງຮ້ອງໄຫ້ ມີການຮ້ອງເພງຄໍ່າຄວນດ້ວຍຄວາມເສົ້າໂສກເສຽໃຈ ພັນລະນາເຖິງຄວາມອາໄລຮັກ ແລະ ເວົ້າເຖິງການກຽມສິ່ງຂອງ ອາຫານ ໝາກໄມ້ທີ່ຜູ້ຕາຍເຄີຍກິນ ເພື່ອອຸທິດໃຫ້ຜູ້ຕາຍ

ໃນງານແຕ່ງງານ ກ່ອນຝ່າຍຊາຍຈະຮັບເຈົ້າສາວອອກຈາກບ້ານພໍ່ແມ່ໄປຢູ່ບ້ານບໍາ ເຈົ້າສາວຮ້ອງໄຫ້ຢ່າງເຕັມທີ່ ສະແດງຄວາມເສົ້າໂສກ ໃນການຈະຕ້ອງຫ່າງຈາກພໍ່ແມ່ພີ່ນ້ອງ ໄປຢູ່ກັບຄອບຄົວຂອງສາມີທີ່ຍັງບໍ່ມີການຄຸ້ນເຄີຍ ແມ່ຂອງເຈົ້າສາວກໍຮ້ອງໄຫ້ດ້ວຍຄວາມເສຽໃຈ ສະແດງຄວາມອາໄລອາວອນ ໃນການທີ່ລູກສາວຂອງຕົນຈະຕ້ອງຫ່າງບ້ານໄປເປັນສະມາຊິກຂອງຄອບຄົວຄົນອື່ນ

## (2) ນິທານ

**ນິທານໄທໃຕ້ຄົງມີຈຳນວນຫລວງຫລາຍ ສາມາດແຍກອອກເປັນປະເພດ ດັ່ງຕໍ່ໄປນີ້ :**

### 1. ນິທານອະລ່ອງ

ຄຳວ່າອະລ່ອງ ຫລືອາລ່ອງ ໝາຍເຖິງພຣະໂພທິສັດ ນິທານປະເພດນີ້ ຕົວເອກເປັນພຣະໂພທິສັດ ໃນພຣະຊາດຕ່າງໆ ນິທານປະເພດນີ້ມີຫລາຍທີ່ສຸດ ມີທັງເລື່ອງທີ່ມີທີ່ມາຈາກ ນິທານຊາດົກ ແລະ ຈາກຊາດົກນອກນິບາດ ນອກຈາກນີ້ແລ້ວ ຍັງມີເລື່ອງທີ່ແຕ່ງຂຶ້ນໃໝ່ຫລາຍໆເລື່ອງ ແຕ່ອ້າງວ່າເປັນນິທານຊາດົກຈຶ່ງຮ້ອງກັນວ່າ ນິທານອະລ່ອງເຊັ່ນດຽວກັບທີ່ມາຈາກຊາດົກ

**2. ນິທານສັດ**

ນິທານສັດຂອງໄທໃຕ້ຄົງ ມັນສະແດງໃຫ້ເຫັນຄວາມໂງ່ຂອງສັດຊະນິດນຶ່ງ ແລະ ຄວາມສະຫລາດຂອງສັດອີກຊະນິດນຶ່ງ ບາງເລື່ອງມີລັກສະນະເປັນນິທານຄະຕິດ້ວຍ ໂດຍໃຫ້ຂໍ້ຄິດທາງກະຣິຍາທັມ

**3. ນິທານຕະລົກອົບອັນ**

ນິທານຕະລົກອົບອັນຂອງໄທໃຕ້ຄົງ ມັກອາໄສແນວຄິດກ່ຽວກັບຄວາມສະຫລາດ ໄຫວພິບ ແລະ ຄວາມໂງ່ ສະແດງໃຫ້ເຫັນຄວາມສະຫລາດມີໄຫວພິບຂອງຕົວລະຄອນ ສາມາດແກ້ບັນຫາສະເພາະໜ້າກົນອຸບາຍຢ່າງສຽບແຫລມ ໃນຂະນະດຽວກັນ ເລື່ອງທີ່ສະແດງແນວຄິດກ່ຽວກັບຄວາມໂງ່ ກໍມັກສະແດງໃຫ້ເຫັນຄວາມໂງ່ຢ່າງຊະນິດທີ່ຄິດບໍ່ເຖິງ ນິທານຕະລົກອົບອັນໄທໃຕ້ຄົງ ຊົມເຊີຍຄວາມສະຫລາດ ແລະ ປັນຍາຂອງປະຊາຊົນ ເຢາະເຢີ້ຍສຽດສີຄົນໂງ່ເຫງົ່າ ທີ່ບໍ່ມີຄວາມຄິດ ແລະ ບໍ່ມີການວິເຄາະປັນຍາໃດໆທັງນັ້ນ

**4. ນິທານຊີວິດ**

ນິທານຊີວິດເລົ່າກັນຄືເລື່ອງທີ່ເຄີຍເກີດຂຶ້ນ ໂດຍເວົ້າເຖິງສະຖານທີ່ ແລະ ຕົວລະຄອນນຶ່ງ ເຄີຍມີຊີວິດຢູ່ແທ້ ທີ່ນິຍົມເລົ່າກັນແຜ່ຫລາຍ ມີເລື່ອງໂອ້ເປ່ມສາມໂລ ເອື້ອຍກັບນ້ອງສາວ ຕະກຽບເງິນ ແລະ ຊາມທອງຂອງລົງ ເປັນຕົ້ນ

**5. ນິທານອະທິບາຍເຫດ**

ນິທານອະທິບາຍເຫດຂອງໄທໃຕ້ຄົງ ມີລັກສະນະເປັນເລື່ອງທີ່ອ່າວສັ້ນ ອະທິບາຍກ່ຽວກັບສິ່ງທີ່ມີຢູ່ໃນທຳມະຊາດ ບາງເລື່ອງອະທິບາຍສາເຫດທີ່ສັດຊະນິດນຶ່ງບໍ່ຖືກກັບສັດອີກຊະນິດນຶ່ງ ບາງເລື່ອງເລົ່າເຖິງສາເຫດທີ່ສັດບາງຊະນິດມີສີສັນ ຫລືສຽງຮ້ອງ ຫລືມີອະໄວຍະວະດັ່ງທີ່ເປັນຢູ່ ນິທານເຫລົ່ານີ້ ນິຍົມເລົ່າໃຫ້ເດັກຟັງ ຊ່ວຍໃຫ້ຮູ້ຈັກສັງເກດສິ່ງທີ່ມີຢູ່ໃນທຳມະຊາດທີ່ເລົ່າກັນແຜ່ຫລາຍກໍມີ ເປັນຫຍັງຄວາຍບໍ່ມີແຂ້ວເບື້ອງເທິງ ແມວກັບເສືອ ແມວກັບໝາ ກະຕ່າຍຫລອກເສືອ ເປັນຕົ້ນ

**6. ນິທານປະຈຳທ້ອງຖິ່ນ**

ນິທານປະຈຳທ້ອງຖິ່ນ ຂອງໄທໃຕ້ຄົງ ມີທັງທີ່ເປັນເລື່ອງອະທິບາຍຄວາມເປັນມາຂອງຊື່ເມືອງແລະອະທິບາຍຄວາມເປັນມາຂອງສະຖານທີ່ໃນທ້ອງຖິ່ນ ເຊັ່ນ: ພູເຂົາ ຫ້ວຍໜອງ ແມ່ນ້ຳ ກ້ອນຫີນໃຫຍ່

ເປັນຕົ້ນ ນິທານປະຈຳທ້ອງຖິ່ນຂອງໄທໃຕ້ຄົງ ທີ່ເລົ່າກັນແຜ່ຫລາຍທີ່ສຸດ ມີດອຍດາວ ໜອກຂາວ ມາວຫລວງ ເມືອງໂກສົມພີ ຫ້ວຍເສືອຫລອກ ເປັນຕົ້ນ

**7. ຕຳນານສ້າງໂລກ**

ຕຳນານສ້າງໂລກຂອງໄທໃຕ້ຄົງ ໃຫ້ຄວາມຮູ້ກ່ຽວກັບແນວຄວາມຄິດຂອງຄົນໄທໃຕ້ຄົງສະໄໝ ກ່ອນ ກ່ຽວກັບກຳເນີດໂລກ ກຳເນີດມະນຸດ ແລະ ສິ່ງຕ່າງໆ ຕຳນານສ້າງໂລກຂອງຄົນໄທໃຕ້ຄົງ ທີ່ຮູ້ຈັກກັນ ຢ່າງແຜ່ຫລາຍທີ່ສຸດ ມີເລື່ອງການສ້າງໂລກ ຂຸນເດີນກັບນາງວັນ ນ້ຳຖ້ວມກ່ຳຟ້າ ເປັນຕົ້ນ

**3. ຮ້ອຍກອງຍາວ**

ຮ້ອຍກອງຍາວຂອງໄທໃຕ້ຄົງມີຫລາຍພໍສົມຄວນ ສາມາດແຍກອອກໄດ້ເປັນ 2 ປະເພດ ດັ່ງຕໍ່ ໄປນີ້

**1. ລີກອະລ່ອງ**

ລີກອະລ່ອງມີຕົວເອກເປັນພຣະໂພທິສັດ ທີ່ຄົນໄທໃຕ້ຄົງຮ້ອງກັນວ່າ ອະລ່ອງ ແລະ ມີເລື່ອງລາວ ກ່ຽວຂ້ອງກັບພຸດທະສາສະໜາ ເຊັ່ນດຽວກັບນິທານອະລ່ອງ ຄົນໄທໃຕ້ຄົງຮ້ອງກັນວ່າ ລີກອະລ່ອງ ມີຈຳນວນ ຫລາຍທີ່ສຸດ ເລົ່າກັນວ່າລວມທັງໝົດມີ 500 ກວ່າເຫລັ້ມ ຕົວຢ່າງເຊັ່ນ ອະລ່ອງລຽງຜາຄຳ ອະລ່ອງກົງກອນ ອະລ່ອງແສງເມືອງ ເປັນຕົ້ນ

2. ຮ້ອຍກອງຍາວທີ່ເປັນໂສກນາດຕະກຳ ຮ້ອຍກອງຍາວປະເພດນີ້ ມີເນື້ອກ່ຽວຂ້ອງກັບຄວາມຮັກ ບ່າວສາວ ຕົວລະຄອນເອກຝ່າຍຊາຍ ກັບຕົວລະຄອນເອກຝ່າຍຍິງ ມີຄວາມຮັກກັນຢ່າງຈິງຈັງ ແລະເລິກເຊິ່ງ ແຕ່ພໍ່ແມ່ຂອງຝ່າຍໃດຝ່າຍນຶ່ງຫ້າມ ບໍ່ຍອມໃຫ້ລູກຂອງຕົນແຕ່ງງານກັບຄູ່ຮັກ ທີ່ເປັນຄົນຖານະຕ່ຳຕ້ອຍ ຕົວລະຄອນເອກຝ່າຍຍິງເສຽໃຈ ຈົນເສຽຊີວິດໄປ ຕົວລະຄອນເອກຝ່າຍຊາຍ ພໍຮູ້ເລື່ອງກໍຂ້າຕົວເອງຕາຍ ເລື່ອງສຸດດ້ວຍຄວາມຕາຍຂອງຄົນທັງສອງທີ່ຮັກກັນຫລາຍ ເຊັ່ນໂອ້ເປ່ມສາມໂລ ເຍຄຳໂຈກັບໜ່າວ ໜອງຢ່າງ ເປັນເລື່ອງທີ່ຮູ້ຈັກຢ່າງດີໃນກຸ່ມຄົນໄທໃຕ້ຄົງ ຊາບຊຶ້ງປະທັບໃຈຂອງ ຜູ້ເລົ່າຜູ້ຟັງ

## ລັກສະນະຂອງວັນນະກຳໄທໃຕ້ຄົງ

**ວັນນະກຳໄທໃຕ້ຄົງມີລັກສະນະສະເພາະຕົນ ດັ່ງຕໍ່ໄປນີ້**

**1. ມີເຄົ້າໂຄງຢ່າງສົມບູນ**

ວັນນະກຳໄທໃຕ້ຄົງ ລ້ວນມີເຄົ້າໂຄງຢ່າງສົມບູນແບບ ວັນນະກຳແຕ່ລະເລື່ອງຈະມີການເລີ່ມຕົ້ນ ແລະມີການບອກຜົນ ເຊັ່ນນິທານອະລ່ອງ ຈະເລົ່າເຖິງຕົວລະຄອນທີ່ເປັນອະລ່ອງ ບໍ່ວ່າຈະຢູ່ໃນຖານະສູງ ຫລືຕ່ຳຕ້ອຍ ຈະຕ້ອງປະສົບເລື່ອງລາວຕ່າງໆ ແລະ ໄດ້ຮັບຄວາມລຳບາກກາກກຳໃນຕອນຕົ້ນ ແຕ່ໃນທີ່ສຸດ ກໍມີຜູ້ຊ່ວຍເຫລືອໃຫ້ໄດ້ປະສົບຄວາມສຸກ ມີກຽດຕິຍົດໃນທີ່ສຸດ ໃນນິທານສັດ ມັກຈະມີສັດທີ່ໃຈດີ ຖືກຫລອກ ຫລືຖືກກົດຂີ່ ແຕ່ສັດເຫລົ່ານັ້ນສາມາດຫາທາງຊ່ວຍຕົວເອງໄດ້ ແລະ ສັດທີ່ຊົ່ວຮ້າຍກໍໄດ້ຮັບຜົນຊົ່ວ ແມ່ນແຕ່ ໃນນິທານຕະຫລົກຂົບຂັນກໍເຊັ່ນດຽວກັນ ສ່ວນຫລາຍຈະເປັນຄົນໂງ່ທີ່ເບົາປັນຍາ ມີການກະທຳຢ່າງໂງ່ເຫງົ່າ ຍິ່ງເຮັດຍິ່ງສະແດງຄວາມໂງ່ຂອງຕົນໃຫ້ເຫັນແຈ້ງ ໃນທີ່ສຸດກໍເຮັດໃຫ້ ເລື່ອງລາວຫຍຸ້ງຍາກໄປໝົດ ດັ່ງນັ້ນ ເຮົາຈຶ່ງສາມາດເວົ້າໄດ້ວ່າ ໃຊ້ເຄົ້າໂຄງເນື້ອຫາທີ່ສົມບູນແບບ ມາສະແດງຂໍ້ຄິດເຫັນຢ່າງໃດຢ່າງນຶ່ງ ເປັນລັກ ສະນະຂອງວັນນະກຳໄທໃຕ້ຄົງຢ່າງນຶ່ງ

**2. ເຕັມໄປດ້ວຍຈິນຕະນາການ**

ວັນນະກຳຂອງໄທໃຕ້ຄົງ ສ່ວນຫລາຍຈະດຳເນີນເລື່ອງຢູ່ໃນໂລກແຫ່ງຈິນຕະນາການ ກ່າວເຖິງ ການໃຊ້ອິດທິປະຕິຫານ ມີຂອງວິເສດ ເຊັ່ນ ທະນູວິເສດ ເກີບວິເສດ ທ່ອນໄມ້ວິເສດ ຕົ້ນຫຍ້າວິເສດ ໆລໆ ມີການປອມແປງໂຕ ບາງເລື່ອງກໍມີອະມະນຸດ ເຊັ່ນ ທ້າວຜີ ນາງຜີພາຍ ຊຶ່ງມີລັກສະນະຄ້າຍຄືຍັກ ນາກ ຊຶ່ງມີລັກສະນະຄ້າຍກັບມັງກອນ ຈະເຫັນວ່າມີສິ່ງທີ່ມະຫັດສະຈັນ ຢູ່ໃນໂລກແຫ່ງຈິນຕະນາການ ຫລາຍຢ່າງ

**3. ມີການຮັບອິດທິພົນທາງພຸດທະສາສະໜາ**

ເນື່ອງຈາກຄົນໄທໃຕ້ຄົງ ນັບຖືພຸດທະສາສະໜາເປັນສ່ວນຫລາຍ ວັນນະກຳໄທໃຕ້ຄົງມີຄະຕິທາງ ພຸດທະສາສະໜາ ເຊັ່ນຕົວເອກໃນເລື່ອງສ່ວນຫລາຍເປັນພໍ່ແມ່ ໄຫວ້ພຣະທຳບຸນທຳທານ ຕັດຖະໜົນຫົນທາງ ສ້າງຂົວ ແລ້ວຈຶ່ງຈະມີລູກທີ່ດີເດັ່ນຍອດຍ້ຽມ ສະແດງໃຫ້ເຫັນຂໍ້ຄິດຂອງຄົນໄທໃຕ້ຄົງ ທີ່ຕ້ອງທຳບຸນທຳທານ ນັ້ນ ຕົວລະຄອນໃນເລື່ອງ ເມື່ອປະສົບບັນຫາ ແລະ ມີຄວາມລຳບາກ ກໍຄິດວ່າຕົວເອງ ທຳຜິດຂໍ້ຫ້າມຂອງ ພຸດທະສາສະໜາ ແຕ່ຖ້າເມື່ອຢູ່ເຢັນເປັນສຸກ ໃຊ້ຊີວິດຢ່າງສຸກສະບາຍ ຂອບຄຸນພຣະ ເພາະຖືວ່າພຣະໃຫ້ຄວາມ ຄຸ້ມຄອງຕົນເອງ ຈຶ່ງຈະມີຊີວິດຢ່າງພໍໃຈ ອີກປະການນຶ່ງ ຕົວລະຄອນທີ່ໃຈດີ ທຳຄວາມດີ ເມື່ອຖືກກົດຂີ່ທຳຮ້າຍ ລ້ວນແຕ່ມີທ້າວຜີ ນາງຜີ ຫລືຂອງວິເສດຊ່ວຍເຫລືອຄຸ້ມຄອງ ແມ່ນແຕ່ເສຽຊີວິດໄປແລ້ວ ກໍໄດ້ຟື້ນຂຶ້ນມາໃໝ່

ພົ້ນອັນຕະລາຍ ແລະ ປະສົບຄວາມສຳເລັດສົມຫວັງທຸກປະການ ແຕ່ຄົນໃຈໂຫດຮ້າຍທີ່ທຳຊົ່ວ ລ້ວນແຕ່ໄດ້ຮັບຜົນຊົ່ວທຸກຄົນ ສະແດງເຖິງຄະຕິພຸດທະສາ ສະໜາ ທີ່ວ່າ ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ

## ການຮັກສາວັນນະກຳຂອງຄົນໄທໃຕ້ຄົງ

### 1. ກ່ອນມີຕົວອັກສອນ

ໃນສະໄໝໂບຮານ ບັນພະບູລຸດຂອງຄົນໄທໃຕ້ຄົງ ທີ່ຍັງບໍ່ມີຕົວອັກສອນ ຈະເກັບຮັກສາວັນນະກຳໂດຍຈື່ຈຳໄວ້ໃນໃຈ ແລະ ເຜີຍແຜ່ໂດຍການເລົ່າສູ່ກັນຟັງ

### 2. ຫລັງຈາກມີຕົວອັກສອນແລ້ວ

ຫລັງຈາກມີຕົວອັກສອນແລ້ວ ຄົນໄທໃຕ້ຄົງນິຍົມແຕ່ງເລື່ອງຍາວເປັນຮ້ອຍກອງ ແລະ ຂຽນໃສ່ກະດາດສາ ແລ້ວຫຍິບເປັນເຫລັ້ມ ຮຽກວ່າລິກ ຄົນໄທໃຕ້ຄົງນິຍົມຖວາຍລິກທີ່ກ່ຽວຂ້ອງກັບສິລະທັມ ໃຫ້ທີ່ວັດ ຮຽກວ່າຫລູ່ລິກ ແລະ ເຊື່ອກັນວ່າ ຫລັງຈາກຫລູ່ລິກແກ່ວັດແລ້ວ ຈະໄດ້ຄວາມດີ ມີບຸນ ລິກທີ່ເອົາໄປຖວາຍຕ້ອງໃຊ້ຜ້າທີ່ຕັດເປັນຜືນຂະໜາດເໝາະກັບຄວາມກວ້າງ ແລະຄວາມຍາວຂອງລິກ ແລ້ວຫຍິບຕິດກັບລິກດ້ານເທິງຜືນນຶ່ງ ແລະ ດ້ານຫລັງຜືນນຶ່ງ ຜ້າທີ່ຫຍິບຕິດລິກຮຽກວ່າ ເສື້ອລິກ ເວລາເກັບລິກໄວ້ ກໍພັບລິກ ແລະ ໃຊ້ເສື້ອລິກຫໍ່ນຳ ແຕ່ລະວັດໃນເຂດໃຕ້ຄົງ ລ້ວນມີບ່ອນເກັບລິກທັງນັ້ນ ໂດຍສ່ວນຫລາຍ ຈະເກັບໄວ້ໃນຕູ້ຢ່າງຮຽບຮ້ອຍເປັນລະບຽບ ລິກທີ່ຄົນໄທໃຕ້ຄົງເກັບໄວ້ ສະອາດສະອ້າງ ໄວ້ໄດ້ເປັນເວລາອ່າວຍາວນານ.